ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0253 /ກປ
ນະຄອນຫຼວງວຽງຈັນ, ວັນທີ 14 FEB 2020

# ຄຳສັ່ງ
## ວ່າດ້ວຍການສ້າງ ເຂດທ້ອນໂຮມສັດໃຫຍ່, ເຂດກັນຊົນ ແລະ ເຂດປອດພະຍາດປາກເປື່ອຍລີ້ງເລັບຢູ່ແຂວງຫຼວງນ້ຳທາ

**ເຖິງ: - ຫົວໜ້າກົມ, ຫ້ອງການ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້**
**- ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງຫຼວງນ້ຳທາ**
**- ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງສິງ, ເມືອງລອງ, ເມືອງນ້ຳທາ ແລະ ເມືອງວຽງພູຄາ**

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0287/ກລປ, ລົງວັນທີ 06 ກຸມພາ 2020.

ເພື່ອຜັນຂະຫຍາຍຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມ ກ່ຽວກັບ ການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ ເພື່ອສົ່ງອອກ ຈາກ ສປປ ລາວໄປ ສປ ຈີນ ທີ່ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ແລະ ອົງການບໍລິຫານພາສີແຫ່ງ ສປ ຈີນ ໄດ້ລົງນາມໃນວັນທີ 30 ເມສາ 2019 ໃຫ້ຖືກຈັດຕັ້ງປະຕິບັດເປັນຮູບປະທຳ ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ສ້າງເຂດທ້ອນໂຮມສັດໃຫຍ່, ເຂດກັນຊົນ ແລະ ເຂດປອດພະຍາດປາກເປື່ອຍລີ້ງເລັບຢູ່ແຂວງຫຼວງນ້ຳທາ ເພື່ອໃຫ້ເປັນປະຕູສົ່ງອອກສັດໃຫຍ່ ໄປ ສປ ຈີນ ຢ່າງເປັນທາງການຕາມທີ່ທັງສອງຝ່າຍໄດ້ຕົກລົງ. ສາມເຂດທີ່ຈະສ້າງຂຶ້ນ ດັ່ງກ່າວ ແມ່ນມີຄວາມສຳຄັນ ຊຶ່ງຈະເປັນການສົ່ງເສີມການລ້ຽງສັດໃຫຍ່ເປັນສິນຄ້າ, ເພີ່ມທະວີການຮ່ວມມືດ້ານການຄ້າ ແລະ ຍົກສູງ ການລົງທຶນຂອງສອງປະເທດໃຫ້ມີການຂະຫຍາຍຕົວ ລວມທັງ ຈະເປັນການ ປະກອບສ່ວນເຂົ້າໃນການ ພັດທະນາເສດຖະກິດ-ສັງຄົມ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ສູງຂຶ້ນ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ກົມລ້ຽງສັດ ແລະ ການປະມົງ ຮັບຜິດຊອບ ຈັດຕັ້ງປະຕິບັດ ວຽກຈຸດສຸມດັ່ງນີ້:

1.1. ຄົ້ນຄວ້າ ສະເໜີແຕ່ງຕັ້ງຄະນະຮັບຜິດຊອບສ້າງເຂດທ້ອນໂຮມສັດໃຫຍ່, ເຂດກັນຊົນ ແລະ ເຂດປອດພະຍາດປາກເປື່ອຍລີ້ງເລັບ ຢູ່ແຂວງຫຼວງນ້ຳທາ ພ້ອມທັງກຳນົດ ຄວາມຮັບຜິດຊອບຂອງຄະນະດັ່ງກ່າວ;

1.2. ສົມທົບກັບ ຂະແໜງລ້ຽງສັດ ແລະ ການປະມົງ ແຕ່ງຕັ້ງພະນັກງານວິຊາການ ລົງສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງສິງ ແລະ ເມືອງອື່ນທີ່ກ່ຽວຂ້ອງ ຂອງແຂວງຫຼວງນ້ຳທາ ເພື່ອດຳເນີນການສຳຫຼວດ, ກຳນົດເຂດປອດພະຍາດປາກເປື່ອຍລີ້ງເລັບ, ເຂດກັນຊົນ ແລະ ເຂດທ້ອນໂຮມສັດໃຫຍ່ ໃຫ້ລະອຽດ ໂດຍໃຫ້ສອດຄ່ອງກັບ

ມາດຕະຖານການສ້າງເຂດປອດພະຍາດປາກເປື່ອຍລີ້ງເລັບດ້ວຍການສັກຢາກັນພະຍາດ ເລກທີ SN/T 4999-2017 ຂອງ ສປ ຈີນ ແລ້ວນຳສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ ແລະ ແຈ້ງໃຫ້ຝ່າຍຈີນ ແລະ ປະກາດໃຫ້ສາທາລະນະຊົນ ຊາບ;

1.3. ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງຫຼວງນໍ້າທາ ຄົ້ນຄວ້າ ແລະ ແຕ່ງຕັ້ງ ວິຊາການສັດຕະວະແພດ ຫຼື ວິຊາການດ້ານການລ້ຽງສັດ ເພື່ອໃຫ້ຮັບຜິດຊອບໃນການ ບໍລິການດ້ານສັດຕະວະແພດ ເປັນຕົ້ນ ການວາງແຜນດ້ານສຸຂະພາບສັດ, ການກວດສຸຂະພາບສັດ, ການເຝົ້າລະວັງ ແລະ ສືບຄົ້ນຫາພະຍາດທາງລະບາດວິທະຍາ, ການສັກຢາກັນພະຍາດ, ການກັກກັນສັດ, ການຂຶ້ນທະບຽນພິມສັດ, ການກວດສອບຍ້ອນຫຼັງ ລວມທັງ ການປະຕິບັດມາດຕະການໂຕ້ຕອບສຸກເສີນໃນເວລາທີ່ກວດພົບເຊື້ອພະຍາດ ແລະ ເກີດການລະບາດຂອງພະຍາດສັດ;

1.4. ທົບທວນ ແລະ ປັບປຸງບັນດານິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ບໍລິການດ້ານສັດຕະວະແພດ ໃຫ້ສອດຄ່ອງກັບລະບຽບການ ຂອງ ສປ ຈີນ ເປັນຕົ້ນ ຂໍ້ຕົກລົງ, ຄຳແນະນຳ, ມາດຕະຖານດ້ານເຕັກນິກ ແລະ ລະບຽບການທີ່ກ່ຽວຂ້ອງ ລວມທັງ ລະບຽບການປະຕິບັດຕໍ່ຜູ້ທີ່ລະເມີດ;

1.5. ສ້າງຄວາມພ້ອມ ກ່ຽວກັບ ພື້ນຖານວັດຖຸເຕັກນິກ, ເຄື່ອງມື ແລະ ຄວາມອາດສາມາດ ໃນການວິໄຈ ພ້ອມທັງຮັບປະກັນການຄຸ້ມຄອງຫ້ອງວິໄຈ ໃຫ້ມີຄຸນນະພາບ ເພື່ອ ໃຫ້ສາມາດ ບົ່ງມະຕິພະຍາດປາກເປື່ອຍລີ້ງເລັບ ແລະ ພະຍາດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມ ກ່ຽວກັບ ການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ ເພື່ອສົ່ງອອກ ຈາກ ສປປ ລາວໄປ ສປ ຈີນ;

1.6. ດຳເນີນການສຳຫຼວດຄືນເຂດປອດພະຍາດປາກເປື່ອຍລີ້ງເລັບຊົ່ວຄາວ ຕາມຂໍ້ຕົກລົງ ຂອງລັດຖະມົນຕີ ເລກທີ 4126/ກປ ລົງວັນທີ 20 ພະຈິກ 2019 ໂດຍໃຫ້ເຮັດການສຳຫຼວດລະອຽດ ກ່ຽວກັບ ສິ່ງກີດຂວາງດ້ານພູມສາດ,ສິ່ງທີ່ຈະປຸກສ້າງ ພ້ອມທັງແຈ້ງໃຫ້ປະຊາຊົນທີ່ເປັນເຈົ້າຂອງດິນຮັບຮູ້ ແລະ ໃຫ້ຄວາມຮ່ວມມື; ສ້າງຈຸດກວດກາ ແລະ ຕິດຕັ້ງປ້າຍຕາມເສັ້ນທາງ ເຂົ້າ-ອອກ ແລະ ສ້າງທີມກວດກາ ລາດຕະເວນ ເພື່ອປ້ອງກັນບໍ່ໃຫ້ສັດທີ່ມີຄວາມສ່ຽງຕິດພະຍາດປາກເປື່ອຍລີ້ງເລັບ ເຂົ້າໄປໃນເຂດປອດພະຍາດໄດ້;

1.7. ສົມທົບກັບ ອົງການທີ່ກ່ຽວຂ້ອງ ກຳນົດ ເສັ້ນທາງ ແລະ ພັດທະນາດ່ານປາງໄຮ ໃຫ້ມີຄວາມພ້ອມ ໃນການກວດກາສັດທີ່ຈະສົ່ງອອກໄປ ສປ ຈີນ;

1.8. ສົມທົບກັບ ອົງການທີ່ກ່ຽວຂ້ອງ ສຳຫຼວດພື້ນທີ່ ທີ່ກຳນົດເປັນເຂດກັນຊົນ ໃນລັດສະໝີ 3 ກິໂລແມັດ ຫ່າງຈາກຂອບນອກຂອງເຂດປອດພະຍາດປາກເປື່ອຍລີ້ງເລັບ ໂດຍໃຫ້ ກຳນົດລາຍຊື່ບ້ານ, ເກັບກຳສະຖິຕິສັດ ທີ່ມີຄວາມສ່ຽງຕິດເຊື້ອພະຍາດປາກເປື່ອຍລີ້ງເລັບ, ຂຶ້ນທະບຽນສັດ, ສັກຢາກັນພະຍາດປາກເປື່ອຍລີ້ງເລັບໃຫ້ໄດ້ 100 % ແລະ ຈັດຕັ້ງການເຝົ້າລະວັງພະຍາດ ພ້ອມທັງປະເມີນລະດັບພູມຄຸ້ມກັນ ຫຼັງການສັກຢາກັນພະຍາດ ຢ່າງເປັນລະບົບຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ;

1.9. ສົມທົບກັບ ອົງການປົກຄອງທ້ອງຖິ່ນ ກຳນົດເຂດທ້ອນໂຮມສັດໃຫຍ່ ໃນຂອບເຂດ ລັດສະໝີ 47 ກິໂລແມັດ ນັບແຕ່ຂອບນອກຂອງເຂດກັນຊົນ ຊຶ່ງ ເຂດດັ່ງກ່າວ ແມ່ນກຳນົດໃຫ້ເປັນເຂດ ລ້ຽງງົວເພື່ອການສົ່ງອອກ. ໃນການສ້າງຕັ້ງຟາມລ້ຽງສັດໃຫຍ່ຢູ່ໃນເຂດດັ່ງກ່າວ ຕ້ອງໄດ້ຂໍອະນຸຍາດ ຕາມຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດ ໃນ ສປປ ລາວ ເລກທີ 0209/ກປ ລົງວັນທີ 06 ກຸມພາ 2013 ແລະ ຕ້ອງໄດ້ຮັບການຢັ້ງຢືນມາດຕະຖານຟາມລ້ຽງງົວຊີ້ນ ຕາມຂໍ້ຕົກລົງຂອງຫົວໜ້າກົມລ້ຽງສັດ ແລະ ການປະມົງ ເລກທີ AFSTD-LF 2018-00003 ລົງວັນທີ 17 ກໍລະກົດ 2018. ສັດທຸກໂຕທີ່ຈະລ້ຽງຢູ່ໃນຟາມດັ່ງກ່າວກໍຕ້ອງໄດ້ຂຶ້ນທະບຽນພິມສັດ, ສັກຢາກັນພະຍາດເຕົ້າໂຮມເລືອດງົວ-ຄວາຍ ແລະ ພະຍາດປາກເປື່ອຍລີ້ງເລັບ 100% ຫຼື ໃຫ້ຝູງສັດມີອັດຕາການສັກຢາໃນຝູງ ກວມ ບໍ່ໃຫ້ຫຼຸດ 95% ຕະຫລອດປີ;

1.10. ສ້າງລະບົບເຝົ້າລະວັງພະຍາດປາກເປື່ອຍລີ້ງເລັບຢ່າງເປັນປົກກະຕິ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ ໂດຍຕ້ອງເຮັດໃຫ້ ພາຍໃນ 2 ປີ ຕ້ອງບໍ່ມີການລາຍງານການເກີດອາການຂອງພະຍາດປາກເປື່ອຍລີ້ງເລັບ ແລະ ບໍ່

ກວດພົບເຊື້ອພະຍາດປາກເປື່ອຍລີ້ງເລັບດ້ວຍການວິໄຈ ຈຶ່ງສາມາດປະກາດເປັນເຂດປອດພະຍາດປາກເປື່ອຍລີ້ງເລັບ ແບບຖາວອນໄດ້;

1.11. ດຳເນີນການປະເມີນ ພູມຄຸ້ມກັນ ຫຼັງການສັກຢາ ຕໍ່ພະຍາດປາກເປື່ອຍລີ້ງເລັບ ຫຼັງການສັກຢາກັນພະຍາດ ຕາມວິທີທີ່ອົງການສຸຂະພາບສັດສາກົນແນະນຳ ໂດຍຕ້ອງໃຫ້ມີ ອັດຕາພູມຄຸ້ມກັນພະຍາດໃນຝູງ ສູງກວ່າ 70%;

1.12. ອອກຄຳແນະນຳ ກ່ຽວກັບການລ້ຽງງົວທົດລອງ ເພື່ອໃຫ້ເປັນ ໂຕຊີ້ວັດ ການເກີດພະຍາດປາກເປື່ອຍລີ້ງເລັບ ຢູ່ໃນເຂດປອດພະຍາດ ໂດຍໃຫ້ຄັດເລືອກເອົາງົວໜຸ່ມທີ່ມີອາຍຸລະຫວ່າງ 8 ຫາ 24 ເດືອນ ຈຳນວນ 30 ໂຕ ທີ່ບໍ່ເຄີຍເປັນພະຍາດປາກເປື່ອຍລີ້ງເລັບມາກ່ອນ;

1.13. ສົມທົບກັບອົງການຄຸ້ມຄອງທີ່ກ່ຽວຂ້ອງ ປະຕິບັດມາດຕະການຄວບຄຸມການເຄື່ອນຍ້າຍສັດ ດັ່ງນີ້:

1) ສັດໃຫຍ່ ທີ່ຈະນຳເຂົ້າມາລ້ຽງ ຢູ່ໃນເຂດທ້ອນໂຮມສັດ ຕ້ອງໄດ້ແຈ້ງ ແລະ ຖືກກວດກາໂດຍພະນັກງານສັດຕະວະແພດທີ່ຖືກມອບໝາຍ;
2) ສັດທີ່ຈະເຄື່ອນຍ້າຍເຂົ້າເຂດປອດພະຍາດປາກເປື່ອຍລີ້ງເລັບ ຕ້ອງຖືກລ້ຽງຢູ່ໃນເຂດທ້ອນໂຮມສັດ ຢ່າງໜ້ອຍ 45 ວັນ ແລະ ຕ້ອງເປັນສັດ ທີ່ມີສຸຂະພາບແຂງແຮງດີ ບໍ່ພົບອາການຂອງພະຍາດຕິດຕໍ່ຮ້າຍແຮງ. ຖ້າພົບ ສັດຕິດພະຍາດຕ້ອງແຍກຈາກຝູງໂດຍທັນທີ;
3) ສັດທີ່ຈະເຄື່ອນຍ້າຍ ເຂົ້າ-ອອກ ຕ້ອງມີເລກທະບຽນພິມສັດ ທີ່ກວດສອບແຫຼ່ງທີ່ມາໄດ້;
4) ສັດທີ່ຈະເຄື່ອນຍ້າຍສົ່ງອອກ ໄປ ສປປ ຈີນ ຕ້ອງຜ່ານການກັກກັນຢ່າງໜ້ອຍ 30 ວັນ ຢູ່ໃນສະຖານທີ່ກັກກັນສັດ ທີ່ອົງການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ສປ ຈີນ ຮັບຮອງ;
5) ການເຄື່ອນຍ້າຍສັດ ຕ້ອງໄປຕາມເສັ້ນທາງທີ່ໄດ້ກຳນົດໄວ້;
6) ພາຫານະ ແລະ ເຄື່ອງມືຮັບໃຊ້ການເຄື່ອນຍ້າຍສັດ ຕ້ອງລ້າງ ແລະ ຂ້າເຊື້ອ ທັງກ່ອນ ແລະ ຫຼັງການໃຊ້ງານ.

1.14. ປັບປຸງລະບົບເຝົ້າລະວັງ, ສືບສວນ-ສອບສວນທາງດ້ານລະບາດວິທະຍາ, ການຄວບຄຸມພະຍາດ ແລະ ສ້າງແຜນສຸກເສີນໄວ້ລ່ວງໜ້າ ເພື່ອກຽມຄວາມພ້ອມ ດ້ານບຸກຄະລາກອນ, ງົບປະມານ, ພາຫານະ, ອຸປະກອນ, ຢາສັດຕະວະແພດ ແລະ ເຄມີພັນ ສຳລັບການວິໄຈພະຍາດສັດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ກຳນົດວ່າດ້ວຍ ເງື່ອນໄຂດ້ານສຸຂານາໄມກ່ຽວກັບການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ ເພື່ອສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ;

1.15. ຖ້າເກີດ ກໍລະນີສົງໄສ ຫລື ເກີດພະຍາດລະບາດສັດ ຢູ່ເຂດທ້ອນໂຮມສັດ, ເຂດກັນຊົນ ແລະ ເຂດປອດພະຍາດປາກເປື່ອຍລີ້ງເລັບ ໃຫ້ ສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ທຸກຂະແໜງການທີ່ກ່ຽວຂ້ອງ ດຳເນີນການປະຕິບັດ ມາດຕະການ ຕາມທີ່ກຳນົດໄວ້ໃນແຜນສຸກເສີນ ໃຫ້ທັນກັບສະພາບການ;

1.16. ສ້າງລະບົບບັນທຶກ, ຄຸ້ມຄອງຂໍ້ມູນຂ່າວສານ ທີ່ເປັນເອກະສານ ແລະ ຂໍ້ມູນ ເອເລັກໂຕຣນິກທີ່ກ່ຽວຂ້ອງກັບການລ້ຽງ, ການເຄື່ອນຍ້າຍ, ການກັກກັນ ລວມທັງການບໍລິຫານຈັດການທັງໝົດໃຫ້ຖືກຕ້ອງ ແລະ ເກັບຮັກສາຢ່າງເປັນລະບົບ ເພື່ອໃຫ້ສາມາດເຂົ້າເຖິງໄດ້ງ່າຍ;

2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງນ້ຳທາ ຈັດຕັ້ງປະຕິບັດ ວຽກຈຸດສຸມ ດັ່ງນີ້:

2.1. ຄົ້ນຄວ້າ ສະເໜີອົງການປົກຄອງແຂວງ ແຕ່ງຕັ້ງຄະນະຮັບຜິດຊອບເພື່ອສົມທົບກັບທີມງານຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການທີ່ກ່ຽວຂ້ອງຂອງ ສປ ຈີນ ຈັດຕັ້ງປະຕິບັດ ຂໍ້ກຳນົດ ວ່າດ້ວຍ ເງື່ອນໄຂດ້ານສຸຂານາໄມກ່ຽວກັບການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ ເພື່ອສົ່ງອອກ ຈາກ ສປປ ລາວ ໄປ ສປຈີນ ໃຫ້ມີປະສິດທິຜົນ;

2.2. ສົມທົບກັບ ອົງການປົກຄອງທ້ອງຖິ່ນຂັ້ນເມືອງ ແລະ ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງສິງ ແລະ ເມືອງອື່ນທີ່ກ່ຽວຂ້ອງ ດຳເນີນການໂຄສະນາ ປຸກລະດົມ ປະຊາຊົນ ເພື່ອ ໃຫ້ຄວາມຮ່ວມມື ໃນການສ້າງເຂດທ້ອນໂຮມສັດໃຫຍ່, ເຂດກັນຊົນ ແລະ ເຂດປອດພະຍາດປາກເປື່ອຍລີ້ງເລັບໃຫ້ເປັນຮູບປະທຳ;

2.3. ຊຸກຍູ້, ສົ່ງເສີມ ປະຊາຊົນ ແລະ ຜູ້ປະກອບການ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ແຜນງານ, ໂຄງການ, ລະບຽບການ, ເງື່ອນໄຂ ແລະ ບັນດາມາດຕະຖານດ້ານເຕັກນິກທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສປ ຈີນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

2.4. ຄຸ້ມຄອງ ການສ້າງຕັ້ງ ໂຄງການລົງທຶນ ດ້ານການລ້ຽງສັດເພື່ອສົ່ງອອກ ໄປ ສປ ຈີນ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກຳນົດ;

2.5. ຄົ້ນຄວ້າ ແລະ ປະກອບ ບຸກຄະລາກອນ ທີ່ມີຄວາມຮູ້ ຄວາມສາມາດ ດ້ານສັດຕະວະແພດ ຫຼື ດ້ານການລ້ຽງສັດ ເພື່ອໃຫ້ເປັນຜູ້ດູແລ, ຮັບຜິດຊອບໃນການປະຕິບັດວຽກງານດ້ານວິຊາສະເພາະ ເປັນຕົ້ນ ການອຳນວຍຄວາມສະດວກໃນການສ້າງຕັ້ງຟາມທອມສັດ, ການຂຶ້ນທະບຽນພົມສັດ, ການສັກຢາກັນພະຍາດ, ການກັກກັນສັດ ແລະ ຄຸ້ມຄອງການເຄື່ອນຍ້າຍສັດ ຢູ່ເຂດທ້ອນໂຮມສັດໃຫຍ່, ເຂດກັນຊົນ, ເຂດປອດພະຍາດປາກເປື່ອຍລົງເລັບ ແລະ ຈຸດດ່ານທີ່ຈະສົ່ງສັດໃຫຍ່ອອກໄປ ສປ ຈີນ;

2.6 ເຂົ້າຮ່ວມ ການສຳຫຼວດ ກຳນົດເຂດ, ກຳນົດສິ່ງກີດຂວາງດ້ານພູມສາດ, ສິ່ງປຸກສ້າງ ລວມທັງການປະຕິບັດບັນດາມາດຕະການດ້ານວິຊາການ ເພື່ອສ້າງເຂດປອດພະຍາດປາກເປື່ອຍລົງເລັບ, ເຂດກັນຊົນ ແລະ ເຂດທ້ອນໂຮມສັດ ຢູ່ເມືອງສິງ ແລະ ບັນດາເມືອງທີ່ກ່ຽວຂ້ອງ ໃຫ້ສຳເລັດຕາມແຜນການທີ່ວາງໄວ້;

2.7 ຮ່ວມກັບອົງການປົກຄອງຂັ້ນທ້ອງຖິ່ນ ແກ້ໄຂບັນຫາ, ປະຕິບັດບັນດາມາດຕະການຕໍ່ຜູ້ທີ່ລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2.8 ກວດກາ, ຕິດຕາມ, ສະຫລຸບ ແລະ ລາຍງານ ວຽກງານ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຊາບຢ່າງເປັນປົກກະຕິ.

3. ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນໃຈກາງສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ ທັງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ປອ.ລຽນ ທິແກ້ວ